ຄຳຖາມທີ່ມັກຖາມເລື້ອຍໆ

**ຖາມ: ຂ້າພະເຈົ້າສາມາດສ້າງ ແລະ ຝາກເງິນເຂົ້າບັນຊີ AdvancePay ໄດ້ແນວໃດ?**

ຕອບ: ມີຫຼາຍທາງເລືອກ ໃຫ້ເລືອກໄດ້: (1) ເຂົ້າເບິ່ງພວກເຮົາທາງອອນລາຍໄດ້ທີ່ www.connectnetwork.com, (2) ຕິດຕັ້ງແອັບມືຖື ConnectNetwork (Android ຫຼື iOS) ໃສ່ອຸປະກອນມືຖືຂອງທ່ານ, (3) ໂທຫາ 800-483-8314 ເພື່ອໃຊ້ລະບົບອັດຕະໂນມັດ ຫຼື ລົມກັບພະນັກງານຮັບສາຍ, (4) ໃຊ້ຕູ້ kiosk ທີ່ GTL ຕິດຕັ້ງໄວ້ (ໃນບ່ອນທີ່ມີ), (5) ຝາກເງິນເຂົ້າທີ່ Western Union ປະຈຳທ້ອງຖິ່ນຂອງທ່ານ ຫຼື (6) ສົ່ງໃບເຊັກ ຫຼື ໃບສັ່ງຈ່າຍເງິນ ທີ່ຈ່າຍໃຫ້ກັບ GTL AdvancePay ແລະ ສົ່ງໄປຫາ:

AdvancePay Service Dept.
PO Box 911722
Denver, CO 80291-1722

**ຖາມ: ຂ້າພະເຈົ້າສາມາດໃຊ້ບັດເຄຼດິດ ຫຼື ບັດເດບິດ ເພື່ອຝາກເງິນໄດ້ບໍ?**

ຕອບ: ໄດ້, GTL ຮັບບັດເຄຼດິດ Visa® ແລະ Mastercard®, ບັດເດບິດ, ແລະ ບັດຕື່ມເງິນ.

**ຖາມ: ຈະໃຊ້ເວລາດົນປານໃດ ເພື່ອໃຫ້ເງິນທີ່ຝາກເຂົ້າປາກົດໃນບັນຊີ?**

ຕອບ: ເມື່ອທ່ານຝາກເງິນດ້ວຍບັດເຄຼດິດ ຫຼື ບັດເດບິດຂອງທ່ານ, ເງິນທີ່ຝາກຈະປາກົດຢູ່ໃນບັນຊີຂອງທ່ານເກືອບທັນທີ.

**ຖາມ: ຂ້າພະເຈົ້າຈະກວດເບິ່ງຍອດເງິນຄົງເຫຼືອໃນບັນຊີຕື່ມເງິນຂອງຕົນ ໄດ້ແນວໃດ?**

ຕອບ: ທ່ານສາມາດກວດຍອດເງິນຄົງເຫຼືອຂອງທ່ານໂດຍການໂທຫາ ລະບົບອັດຕະໂນມັດຂອງພວກເຮົາທີ່ 800-483-8314, ລົງທະບຽນທາງອອນລາຍຜ່ານ ConnectNetwork ໄດ້ທີ່ www.connectnetwork.com, ຕິດຕັ້ງແອັບມືຖື ConnectNetwork ໃສ່ອຸປະກອນມືຖືຂອງທ່ານ.

**ຖາມ: ອັດຕາຄ່າໂທຂອງ AdvancePay ແພງກວ່າ ຫຼື ບໍ?**

ຕອບ: ໂດຍທົ່ວໄປແລ້ວ, ອັດຕາຄ່າໂທຂອງ AdvancePay ແມ່ນເທົ່າກັບ ຫຼື ຖືກກວ່າ ການເກັບຄ່າໂທແບບທຳມະດາ, ແຕ່ວ່າອັດຕາຄ່າໂທທັງໝົດແມ່ນ ໄດ້ຮັບການຄຸ້ມຄອງໂດຍສັນຍາໃຫ້ສິ່ງອຳນວຍຄວາມສະດວກ.

**ຖາມ: ຂ້າພະເຈົ້າຈະໄດ້ຮັບລາຍງານງົບດຸນປະຈຳເດືອນບໍ?**

ຕອບ: ລາຍງານງົບດຸນການນຳໃຊ້ ສຳລັບບັນຊີ AdvancePay ຂອງທ່ານ ແມ່ນມີຢູ່ທາງອອນລາຍທີ່www.connectnetwork.com ແລະ ບໍ່ເສຍຄ່າຫຍັງເລີຍ.

**ຖາມ: ຂ້າພະເຈົ້າຈະໄດ້ຮັບການສົ່ງເງິນທີ່ຍັງບໍ່ໄດ້ໃຊ້ຄືນບໍ ເມື່ອຜູ້ຖືກກັກຂັງໄດ້ຮັບການປ່ອຍອອກມາແລ້ວ?**

ຕອບ: ການສົ່ງເງິນຄືນໃຫ້ຜູ້ຖືບັນຊີທີ່ໄດ້ຮັບການກວດສອບແລ້ວ ສາມາດເຮັດໄດ້ຜ່ານຕົວແທນບໍລິການລູກຄ້າຂອງພວກເຮົາ. ໂທຫາ 877-650-4249 ສຳລັບຂໍ້ມູນເພີ່ມຕື່ມ.

**ຖາມ: ຫຼັງຈາກການສ້າງບັນຊີ AdvancePay ໄດ້ແລ້ວ, ຂ້າພະເຈົ້າ ສາມາດປ່ຽນກັບໄປໃຊ້ການຮຽກເກັບເງິນຮູບແບບອື່ນໄດ້ບໍ?**

ຕອບ: ບໍ່. ເມື່ອໝາຍເລກໂທລະສັບຖືກຕັ້ງເປັນບັນຊີ AdvancePay, ຈະບໍ່ສາມາດໃຊ້ຮູບແບບການຮຽກເກັບເງິນອື່ນໆໄດ້ແລ້ວ. ເຖິງຢ່າງໃດກໍຕາມ, ທ່ານຈະມີທາງເລືອກໃນການເລືອກ AdvancePay OneCall ຢູ່ສະເໜີ ເພື່ອຮັບ ແລະ ຈ່າຍເງິນ ດ້ວຍການໂທພຽງຄັ້ງດຽວ ໂດຍບໍ່ຕ້ອງສ້າງບັນຊີ AdvancePay.

**ຖາມ: ຂ້າພະເຈົ້າສາມາດບໍລິຫານຈັດການບັນຊີຂອງຕົນທາງອອນລາຍໄດ້ບໍ?**

ຕອບ: ໄດ້. ທ່ານສາມາດລົງທະບຽນທາງອອນລາຍຜ່ານ ConnectNetwork ໄດ້ທີ່ www.connectnetwork.com ຫຼື ທ່ານສາມາດດາວໂຫຼດແອັບ ConnectNetwork ໃນອຸປະກອນມືຖືຂອງທ່ານໄດ້.

**ຖາມ: ຂ້າພະເຈົ້າຈະໄດ້ຮັບການແຈ້ງເຕືອນແນວໃດ ເມື່ອຍອດເງິນຄົງເຫຼືອໃນບັນຊີ AdvancePay ຂອງຕົນເຫຼືອໜ້ອຍ?**

ຕອບ: ການແຈ້ງຍອດເງິນຄົງເຫຼືອໃນບັນຊີ AdvancePay ເຫຼືອໜ້ອຍຂອງ GTL ແມ່ນໂປແກຼມແຈ້ງເຕືອນດ້ວຍການສະໝັກສະມາຊິກໃນລາຄາມາດຕະຖານທີ່ ຖືກອອກແບບມາເພື່ອແຈ້ງໃຫ້ທ່ານຊາບໃນເວລາທີ່ທ່ານຕ້ອງໄດ້ຕື່ມເງິນເຂົ້າໃ ສ່ບັນຊີຂອງທ່ານ.
ຈະມີການສົ່ງຂໍ້ຄວາມຕົວໜັງສືໜຶ່ງສະບັບໃຫ້ທ່ານທຸກໆຄັ້ງທີ່ຍອດເງິນຄົງເຫຼືອ ໃນບັນຊີຂອງທ່ານບັນລຸໄດ້ຕາມເງື່ອນໄຂ. ເພື່ອລົງທະບຽນ, ພິມ ADVANCE ສົ່ງໄປທີ່ 91613. ອາດຈະມີການເກັບຄ່າການສົ່ງຂໍ້ຄວາມ ແລະ ຂໍ້ມູນ.
ເພື່ອເບິ່ງການອະທິບາຍເຖິງເງື່ອນໄຂໃນການນຳໃຊ້ ສຳລັບການແຈ້ງເຕືອນທາງຂໍ້ຄວາມ ຫຼື ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ໄປທີ່ www.connectnetwork.com.

**ຖາມ: ຂ້າພະເຈົ້າສາມາດຕັ້ງການຊຳລະໂດຍອັດຕະໂນມັດໄດ້ບໍ?**

ຕອບ: ທ່ານສາມາດເລືອກຄຸນສົມບັດການໂຫຼດຊ້ຳແບບອັດຕະໂນມັດ ເມື່ອທ່ານຝາກເງິນຜ່ານລະບົບອັດຕະໂນມັດທີ່ 800-483-8314 ຫຼື ກັບບັນຊີຂອງທ່ານທາງອອນລາຍໄດ້ທີ່ connectnetwork.com.
ເມື່ອໄດ້ຮັບການແຈ້ງແລ້ວ, ເລືອກເຂົ້າໄປເພື່ອຈັດເກັບເລກບັດເຄຼດິດຂອງທ່ານ ແລະ ຕັ້ງຄ່າຝາກເງິນເຂົ້າໃນບັນຊີຂອງທ່ານໂດຍອັດຕະໂນມັດ.

**ຖາມ: ຈະເຮັດແນວໃດ ຖ້າໝາຍເລກໂທລະສັບຂອງຂ້າພະເຈົ້າ ຖືກບົດກັ້ນຈາກການຮັບສາຍໂທລະສັບຂອງນັກໂທດທີ່ໂທເຂົ້າມາ?**

ຕອບ: ຖ້າມີຄຳຖາມກ່ຽວກັບໝາຍເລກໂທລະສັບທີ່ຖືກບລັອກ ຫຼື ບັນຫາໃນການຮຽກເກັບເງິນ, ກະລຸນາໂທຫາໜ່ວຍບໍລິການລູກຄ້າຂອງ GTL ທີ່ 877-650-4249.

**ຖາມ: AdvancePay OneCall ແມ່ນຫຍັງ?**

ຕອບ: ດ້ວຍ AdvancePay OneCall (APOC), ທ່ານສາມາດເລືອກທີ່ຈະຮັບ ແລະ ຊຳລະ ດ້ວຍການໂທພຽງຄັ້ງດຽວ ໂດຍບໍ່ຈຳເປັນຕ້ອງຕັ້ງ ຫຼື ຕື່ມເງິນໃສ່ບັນຊີຕື່ມເງິນຂອງ AdvancePay.
ຈະໃຊ້ອັດຕາຄ່າໂທແບບຕື່ມເງິນມາດຕະຖານຂອງ AdvancePay.
ອາດຈະມີຄ່າທຳນຽມການເຮັດທຸລະກຳ ສຳລັບການໂທ APOC.
ລູກຄ້າທີ່ບໍ່ມີບັນຊີເບີໂທລະສັບຕື່ມເງິນຂອງ AdvancePay ຫຼື ມີເງິນບໍ່ພຽງພໍໃນບັນຊີຂອງພວກເຂົາ, ຈະໄດ້ຮັບການສະເໜີ APOC ເປັນທາງເລືອກໃນການໂທຫານັກໂທດ.



# AdvancePay®

ການຕື່ມເງິນລ່ວງໜ້າສຳລັບຄອບຄົວນັກໂທດຂອງ GTL

## ວິທີທີ່ໄວທີ່ສຸດ, ປອດໄພທີ່ສຸດໃນການຕື່ມເງິນໃສ່ບັນຊີໂທຫານັກໂທດ

ໃນປັດຈຸບັນ ລູກຄ້າຂອງ AdvancePay ສາມາດໃຊ້ໄດ້

www.connectnetwork.com

ConnectNetwork GTL



ການຕື່ມເງິນລ່ວງໜ້າສຳລັບຄອບຄົວນັກໂທດຂອງ GTL

## ການບໍລິການ ສຳລັບຄອບຄົວ ແລະ ໝູ່ເພື່ອນ

ສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນຂອງນັກໂທດ ແມ່ນມີທາງເລືອກໃນການຕັ້ງບັນຊີການໂທແບບຕື່ມເງິນໂດຍໃຊ້ບັດເຄຼດິດ ຫຼື ບັດເດບິດ, ຝາກເງິນສົດຢູ່ Western Union, ເຊັກ ຫຼື ໃບສັ່ງຈ່າຍເງິນ. ການໂທທີ່ອາດຖືກບູ໊ອກເປັນຢ່າງອື່ນ ແມ່ນສາມາດໃຊ້ໄດ້ຜ່ານໂປແກຼມ AdvancePay ຂອງ GTL ແລ້ວໃນຕອນນີ້.

## ມັນເຮັດວຽກແນວໃດ?

AdvancePay ແມ່ນບໍລິການເກັບຄ່າໂທແບບຕື່ມເງິນ ທີ່ອະນຸຍາດໃຫ້ຮັບສາຍຈາກນັກໂທດໃນສະຖານທີ່ກັດສ້າງໄປຫາໝາຍເລກໂທລະສັບຂອງທ່ານ ໂດຍບໍ່ມີຂໍ້ຈຳກັດຂອງການຮຽກເກັບເງິນແບບມາດຕະຖານ. ເມື່ອນັກໂທດພະຍາຍາມໂທຫາເບີທີ່ບໍ່ສາມາດຮຽກເກັບເງິນໄດ້, AdvancePay ຈະໃຫ້ທາງເລືອກໃຫ້ຝ່າຍທີ່ຖືກໂທຫາ ສ້າງບັນຊີຕື່ມເງິນ. ຫຼັງຈາກສ້າງບັນຊີຕື່ມເງິນແລ້ວ, ການເກັບຄ່າໂທຫາເບີໂທລະສັບດັ່ງກ່າວ ອາດຈະແມ່ນເກັບຈາກຈຳນວນເງິນທີ່ຕື່ມໄວ້ໃນບັນຊີ. ຫຼັງຈາກເງິນໝົດແລ້ວ, ລະບົບຈະແຈ້ງໃຫ້ເຈົ້າຂອງບັນຊີຕື່ມເງິນ.

ສຳລັບການບໍລິຫານຈັດການບັນຊີທີ່ສົມບູນກວ່າ, ທ່ານສາມາດຝາກເງິນ ແລະ ເບິ່ງຍອດເງິນຄົງເຫຼືອຂອງທ່ານໄດ້ທີ່ connectnetwork.com.

## ບໍ່ມີພາດສາຍໂທເຂົ້າ

ຜູ້ຖືບັນຊີ AdvancePay ສາມາດໝັ້ນໃຈໄດ້ວ່າ ພວກເຂົາຈັດການບັນຊີຂອງຕົນພຽງຜູ້ດຽວ, ຮັບປະກັນວ່າຈະສາມາດໄດ້ຮັບສາຍໂທເຂົ້າທີ່ສຳຄັນຂອງຕົນ. ລະບົບອັດຕະໂນມັດຂອງພວກເຮົາຈະຕິດຕໍ່ຜູ້ຖືບັນຊີເມື່ອຕ້ອງການຕື່ມເງິນເພີ່ມ. ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຮັດທຸລະກຳຝາກເງິນໃນອະນາຄົດ, ສາມາດຈັດເກັບເລກບັດເຄຼດິດ ແລະ ບັດເດບິດໄວ້ໄດ້ຢ່າງປອດໄພ. ທາງເລືອກໃນການຝາກເງິນເຂົ້າບັນຊີໂດຍອັດຕະໂນມັດດ້ວຍບັດເຄຼດິດ ຫຼື ບັດເດບິດ ທີ່ຈັດເກັບໄວ້ໃນເວລາທີ່ເງິນເກືອບຈະໝົດແມ່ນສາມາດໃຊ້ໄດ້ເຊັ່ນກັນ.

## ມີຄຳຖາມບໍ?

ພະແນກບໍລິການຂອງ AdvancePay ພ້ອມທີ່ຈະຕອບທຸກຄຳຖາມທີ່ກ່ຽວຂ້ອງກັບການຮຽກເກັບເງິນ:

ການບໍລິການລູກຄ້າ

**877-650-4249**

ເບີແຟັກ

**(866) 441-7285**

ລະບົບອັດຕະໂນມັດ

**800-483-8314**

ເວັບໄຊ

www.connectnetwork.com

ອີເມວ

support@connectnetwork.com

ແອັບ

ດາວໂຫຼດແອັບ ConnectNetwork ໃນ Google Play Store ຫຼື Apple Store.

ທີ່ຢູ່ໄປສະນີ

AdvancePay Service Dept.
PO Box 911722
Denver, CO 80291-1722

ວິທີທີ່ງ່າຍທີ່ສຸດໃນການສ້າງ ແລະ ບໍລິຫານຈັດການບັນຊີ AdvancePay ແມ່ນທາງອອນລາຍທີ່ www.connectnetwork.com. ທ່ານສາມາດສ້າງບັນຊີເບີໂທລະສັບ, ຝາກເງິນ ແລະ ກວດຍອດເງິນຄົງເຫຼືອຜ່ານເວັບໄຊ ConnectNetwork.

ລູກຄ້າຍັງສາມາດໃຊ້ລະບົບໂທລະສັບອັດຕະໂນມັດຂອງ GTL ເພື່ອສ້າງບັນຊີ ແລະ ຝາກເງິນດ້ວຍບັດເຄຼດິດໄດ້ອີກດ້ວຍ. ລະບົບດັ່ງກ່າວແມ່ນອັດຕະໂນມັດຢ່າງສົມບູນ ແລະ ສາມາດເຂົ້າເຖິງໄດ້ໂດຍການໂທຫາ 800-483-8314.

ນອກຈາກນັ້ນ, ຍັງສາມາດສ້າງບັນຊີ ແລະ ສາມາດຝາກເງິນ ໄດ້ຜ່ານແອັບ ConnectNetwork ສຳລັບອຸປະກອນມືຖືຂອງທ່ານ, ໂດຍການໄປທີ່ຫ້ອງການ Western Union ຫຼື ໂດຍການສົ່ງເຊັກ ຫຼື ໃບສັ່ງຈ່າຍເງິນທີ່ຈ່າຍໃຫ້ກັບ GTL AdvancePay ທາງໄປສະນີໄປຍັງທີ່ຢູ່ຂ້າງເທິງ.

ອາດຈະເກັບຄ່າທຳນຽມການເຮັດທຸລະກຳໃນການເງິນຝາກ.

ການບໍລິຫານຈັດການບັນຊີທາງອອນລາຍ ແລະ ການຊຳລະ

**www.connectnetwork.com**

## ວິທີການຫຼີກລ້ຽງສາຍຖືກຕັດຂາດ!

- ຢ່າພະຍາຍາມໂທແບບ 3-ວິທີທາງ
- ຢ່າພະຍາຍາມທີ່ຈະໂອນສາຍ
- ຢ່າໃຫ້ນັກໂທດຖືສາຍລໍຖ້າ
- ຢ່າໃຊ້ ຫຼື ຮັບສາຍ "ລໍຖ້າ"
- ຢ່າກົດເບີໝາຍເລກເທິງແຜ່ນສຽງສຳພັດໃນລະຫວ່າງການໂທ (ທັງໃນໂທລະສັບນັກໂທດ ແລະ ໂທລະສັບຄູ່ສົນທະນາ)
- ຢ່າຢຸດການສົນທະນາເປັນເວລາດົນ ເພາະວ່າເຖິງຈະເປັນການຢຸດພຽງສັ້ນໆ ກໍອາດຈະເຮັດໃຫ້ສາຍຖືກຕັດຂາດໄດ້

**ເບີໂທທີ່ຖືກບູ໊ອກ**

ເມື່ອໝາຍເລກໃດໜຶ່ງຖືກບູ໊ອກ, ມີພຽງແຕ່ບຸກຄົນທີ່ມີລາຍຊື່ຢູ່ໃນເບີດັ່ງກ່າວເທົ່ານັ້ນທີ່ອາດຈະປົດບູ໊ອກເບີດັ່ງກ່າວໄດ້ໂດຍການໂທ:

**800-483-8314**

**ແຈ້ງການ**

ການຊຳລະຂອງ AdvancePay ອາດຈະຕ້ອງເສຍຄ່າທຳນຽມ.
ລາຍລະອຽດທີ່ລະບຸໄວ້ອາດມີການປ່ຽນແປງໂດຍບໍ່ຕ້ອງແຈ້ງໃຫ້ຊາບ. ໜັງສືນີ້ອາດຈະຖືກສຳເນົາ ແລະ ແຈກຢາຍໃຫ້ ນັກໂທດ, ສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນ.

ConnectNetwork GTL

www.gtl.com

AdvancePay Service Dept.
PO Box 911722
Denver, CO 80291-1722
800-483-8314

ລະຫັດປະຈຳຕົວຜະລິດຕະພັນ 7000100

© 2021 Global Tel*Link Corporation. ສະຫງວນລິຂະສິດ. AdvancePay ແມ່ນເຄື່ອງໝາຍການຄ້າຈົດທະບຽນຂອງ Global Tel*Link.